ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----000-----

ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ

ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ນະຄອນຫລວງວຽງຈັນ, ວັນທີ 09 ມິຖຸນາ 2015

## ບົດບັນທຶກກອງປະຊຸມສະພາບໍລິຫານ ຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ສະໄໝສາມັນຄັ້ງທີ 21 ທີ່ ເມືອງເຊໂປນ ແຂວງສະຫວັນນະເຂດ, (27-28 ພຶດສະພາ 2015)

ກອງປະຊຸມສະພາບໍລິຫານ ຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ສະໄໝສາມັນ ຄັ້ງທີ 21 ໄດ້ຈັດຂຶ້ນຢູ່ ເມືອງເຊໂປນ ແຂວງສະຫວັນນະເຂດ ໂດຍມີຈຸດປະສົງເພື່ອທົບທວນຄືນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ວຽກງານ ທລຍ ແຕ່ກອງປະຊຸມຄັ້ງຜ່ານມາ ແລະ ເພື່ອຂໍທິດຊີ້ນຳຈາກຄະນະສະພາບໍລິຫານ ສຳລັບການຈັດຕັ້ງ ປະຕິບັດວຽກງານໃນໄລຍະຕໍ່ໄປ. ກອງປະຊຸມໄດ້ດຳເນີນເປັນເວລາ 2 ມື້ ທີ່ເຕັມໄປດ້ວຍບັນຍາກາດອັນຟົດຟື້ນ, ດ້ວຍຄວາມຮັບຜິດຊອບສູງ, ມີການສົນທະນາ ແລກປ່ຽນຄວາມຄິດເຫັນໃນການຢ້ຽມຢາມກິດຈະກຳຕົວຈິງຂອງ ທລຍ ຢູ່ພາກສະໜາມ ເພື່ອມາສົມທົບໃສ່ບົດລາຍງານປະຈຳປີຂອງວຽກງານ ທລຍ ຕໍ່ສະພາບໍລິຫານ. ການດຳເນີນ ກອງປະຊຸມໃນຄັ້ງນີ້ປະກອບດ້ວຍ 2 ພາກຄື:

*ພາກທີ (1.) ການຢ້ຽມຢາມພາກສະໜາມ (27 ພຶດສະພາ 2015)*, ປະກອບມີ 4 ຈຸດໃຫຍ່ ທີ່ມີກິດຈະກຳ ອັນພົ້ນເດັ່ນຂອງວຽກງານ ທລຍ ທີ່ຖືວ່າເປັນຕົວແບບໃນການແກ້ໄຂຄວາມທຸກຍາກຂອງບ້ານ ເຊິ່ງສາມາດ ຂະຫຍາຍອອກທາງກວ້າງສູ່ບ້ານອື່ນໆ ໄດ້ພ້ອມທັງໄດ້ແວ່ຊົມຫັດຖະກຳອັນສວຍງາມ ບວກກັບຮ່ອງຮອຍປະຫວັດ ສາດໃນຊ່ວງສົງຄາມ. ຈຸດທີ 1: ການໄປຢ້ຽມຈຸດສຸມແດນວິໄລເມືອງນອງ ເພື່ອຢ້ຽມຢາມ ແລະ ຮັບຟັງການລາຍ ງານສະພາບການພັດທະນາ ເສດຖະກິດສັງຄົມຂອງຈຸດສຸມດັ່ງກ່າວ ເຊິ່ງໃນນັ້ນກໍປະກອບມີກິດຈະກຳຂອງ ທລຍ ທີ່ປະກອບສ່ວນເປັນຕົ້ນແມ່ນໂຄງການສ້ອມແປງ ແລະ ວາງທໍ່ທາງ, ກໍ່ສ້າງໂຮງຮຽນປະຖົມ, ຝຶກອົບຮົມເຕັກນິກ ການກ້າເບ້ຍ ແລະ ປູກຢາງບົງ ລວມທັງການຢ້ຽມຢາມກິດຈະ ກຳຂອງໂຄງການປັບປຸງຊີວິດການເປັນຢູ່ ເພື່ອ ຄ້ຳປະກັນດ້ານໂພຊະນາການ; ຈຸດທີ 2: ຢ້ຽມຢາມກິດຈະກຳ ທລຍ ຢູ່ບ້ານແກ້ງລົ້ມ ທີ່ໄດ້ຮັບການຊ່ວຍເຫລືອຈາກ ທລຍ 1 ແລະ ທລຍ 2 ເປັນຕົ້ນ ໂຄງການກໍ່ສ້າງສະໂມສອນກຸ່ມບ້ານ, ສ້ອມແປງເສັ້ນທາງ, ກໍ່ສ້າງຂົວ ແລະ ວັງ ສະຫງວນ ລວມທັງ ກິດຈະກຳປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານ ໂພຊະນາການ; ຈຸດທີ 3 ແລະ ຈຸດທີ 4: ມີການທ່ຽວຊົມຮ່ອງຮອຍປະຫວັດສາດໃນໄລຍະ ຕໍ່ສູ້ກູ້ຊາດ ໂດຍສະເພາະບັ້ງຮົບລຳເຊີນ 719 ແລະ ເສັ້ນທາງ ໂຮຈິມິນ ຢູ່ບ້ານດົງ ເມືອງເຊໂປນ.

*ພາກທີ (2.) ການລາຍງານ ແລະ ນຳສະເໜີ* ກອງປະຊຸມຄັ້ງນີ້ໄດ້ໄຂຂຶ້ນຢ່າງເປັນທາງການໃນວັນທີ 28 ພຶດສະພາ 2015 ພາຍໃຕ້ການເປັນປະທານຂອງ ທ່ານ ບຸນເຮືອງ ດວງພະຈັນ ລັດຖະມົນຕີປະຈຳຫ້ອງວ່າການ